ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ
LAO CEMENT PUBLIC COMPANY

ຖະໜົນ ໜອງບອນ ວຽງຈັນ, ສ. ປ. ປ. ລາວ ຕູ້ ປ.ນ 6821, ໂທຣ: (856-21) 412111, 451116 ແຟັກ: 263120, 451222
NONGBONE RD, VIENTIANE, LAO P.D.R P.O.BOX 6821, TEL: (856-21) 412111, 451116 FAX: 263120, 451222
E-mail: Lcc@laocement.com, www.laocement.com

ເລກທີ 187 /ບຊລ

ນະຄອນຫລວງວຽງຈັນ, ວັນທີ 08 JUN 2018

ຮຽນ: ທ່ານຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວມະຫາຊົນ, ທີ່ນັບຖືຢ່າງສູງ

ເລື່ອງ: ກຳນົດວັນບັນທຶກບັນຊີທະບຽນຜູ້ຖືຮຸ້ນ (Record Date) ເພື່ອກຳນົດສິດຮັບເງິນປັນຜົນຂອງຜູ້ຖືຮຸ້ນບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2017.

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ວັນທີ 10/12/2012
- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 007/ຄຄຊ, ວັນທີ 03/04/2014
- ອີງຕາມມະຕິກອງປະຊຸມຜູ້ຖືຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2017, ວັນທີ 31/05/2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ໃນນາມບໍລິສັດຈົດທະບຽນ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ກ່ຽວກັບການກຳນົດວັນບັນທຶກບັນຊີທະບຽນຜູ້ຖືຮຸ້ນ ໃນວັນທີ 19/06/2018 (Record Date) ເພື່ອກຳນົດສິດໄດ້ຮັບເງິນປັນຜົນຂອງຜູ້ຖືຮຸ້ນບໍລິສັດ ຊີມັງລາວ ມະຫາຊົນ ປະຈຳປີ 2017 ແລະ ກຳນົດມື້ຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ ໃນວັນທີ 29/06/2018 ຕາມມະຕິກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ສະໄໝສາມັນ ຄັ້ງທີ 1 ປະຈຳປີ 2017, ວັນທີ 31/05/2018 ທີ່ຜ່ານມາ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານເພື່ອພິຈາລະນາຕາມຄວາມສົມຄວນດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ບໍລິສັດ ຊີມັງລາວ ມະຫາຊົນ
ຜູ້ອຳນວຍການໃຫຍ່

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ